**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

--------------------------------

Sacombank
ທະນາຄານ ຊາຄອມແບັງ ລາວ

ເລກທີ 426/2022/ທຊລ

ນະຄອນຫຼວງວຽງຈັນ, ວັນທີ 01/06/2022

# ແຈ້ງການ

**ຮຽນ:**
- ອົງການຈັດຕັ້ງລັດ ແລະ ເອກະຊົນ.
- ບັນດາທ່ານລູກຄ້າ, ຄູ່ຄ້າ ແລະ ຄູ່ຮ່ວມທຸລະກິດ.
- ທຸກພາກສ່ວນທີ່ກ່ຽວຂ້ອງ.

**ເລື່ອງ:** ການປ່ຽນຊື່ ແລະ ຕາປະທັບໃໝ່ຂອງ ທະນາຄານ ໄຊ່ງ່ອນເທືອງຕິ່ນລາວ ຈຳກັດຜູ້ດຽວ.

- ອີງຕາມ ໃບອະນຸຍາດ ດຳເນີນທຸລະກິດການທະນາຄານ, ເລກທີ 07/ທຫລ, ລົງວັນທີ 13 ທັນວາ 2021;
- ອີງຕາມ ໃບທະບຽນວິສາຫະກິດ, ເລກທີ 2095/ຈທວ, ລົງວັນທີ 23 ທັນວາ 2021;
- ອີງຕາມ ດຳລັດ ວ່າດ້ວຍຕາປະທັບ ສະບັບເລກທີ: 322/ລບ, ລົງວັນທີ 01 ຕຸລາ 2018.

ທະນາຄານ ໄຊ່ງ່ອນເທືອງຕິ່ນລາວ ຈຳກັດຜູ້ດຽວ (ຊາຄອມແບັງ ລາວ), ຂໍຖືເປັນກຽດແຈ້ງມາຍັງບັນດາທ່ານຊາບວ່າ: ຊາຄອມແບັງ ລາວ ໄດ້ມີການປ່ຽນແປງຊື່ ແລະ ນຳໃຊ້ຕາປະທັບໃໝ່ ຢ່າງເປັນທາງການ ເລີ່ມຕັ້ງແຕ່ວັນທີ 01/06/2022 ເປັນຕົ້ນໄປ ເພື່ອປະຕິບັດໃຫ້ສອດຄ່ອງຕາມລະບຽບການກົດໝາຍ. ການປ່ຽນແປງຊື່ ແລະ ນຳໃຊ້ຕາປະທັບໃໝ່ ແມ່ນມີລາຍລະອຽດດັ່ງລຸ່ມນີ້:

| | **ຊື່ເກົ່າ:** | **ຊື່ໃໝ່:** |
|---|---|---|
| ພາສາ ລາວ | **ທະນາຄານ ໄຊ່ງ່ອນເທືອງຕິ່ນ ລາວ ຈຳກັດ.**<br>ຊຽນຫຍໍ້: "ທະນາຄານ ຊາຄອມແບັງ ລາວ" | **ທະນາຄານ ໄຊ່ງ່ອນເທືອງຕິ່ນ ລາວ ຈຳກັດຜູ້ດຽວ.**<br>ຊຽນຫຍໍ້: "ຊາຄອມແບັງ ລາວ" |
| ພາສາ ອັງກິດ | SAIGON THUONG TIN BANK LAO CO.,LTD.<br>abbreviation: "SACOMBANK LAO" | SAI GON THUONG TIN BANK LAO SOLE CO.,LTD.<br>abbreviation: "SACOMBANK LAO" |
| | **ຕາປະທັບເກົ່າ**<br> | **ຕາປະທັບໃໝ່**<br> |

ການປ່ຽນຊື່ ແລະ ຕາປະທັບໃໝ່ຂອງ ຊາຄອມແບັງ ລາວ ຈະບໍ່ມີຜົນໃດໆ ຕໍ່ອົງການຈັດຕັ້ງ ຫຼື ພາກສ່ວນທີ່ກ່ຽວຂ້ອງ ທີ່ໄດ້ມີທຸລະກຳ, ການພົວພັນ, ພັນທະທາງທຸລະກິດ ນຳຊາຄອມແບັງ ລາວ ໃນໄລຍະຜ່ານມາ ແລະ ຊາຄອມແບັງ ລາວ ຍັງສືບຕໍ່ປະຕິບັດສິດ ພັນທະ ແລະ ສະໜອງບັນດາຜະລິດຕະພັນ - ບໍລິການ ຕາມປົກກະຕິ.

ດັ່ງນັ້ນ, ທາງຊາຄອມແບັງ ລາວ ຈຶ່ງຖືເປັນກຽດແຈ້ງມາຍັງບັນດາທ່ານ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອຊາບ. TAS

**ທະນາຄານ ໄຊ່ງ່ອນເທືອງຕິ່ນ ລາວ ຈຳກັດຜູ້ດຽວ**

**ຜູ້ອຳນວຍການໃຫຍ່**

Pham Quang Phu

044 ຖະໜົນແຫ່ງບຸນ, ບ້ານຫາຍໂສກ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ.
ໂທ: (+856-21) 26 7979, ແຟັກ: (+856-21) 265 725, Website: www.sacombank.com.la